

# ເຕັກນິກການປູກໝາກລຳໃຍ

ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ
**ຂະແໜງງານໄມ້ໃຫ້ໝາກ**

ໝາກລຳໃຍ ເປັນຢູ່ເຂດຮ້ອນ ເຂດພາກ ໃຕ້ ຂອງ ປະເທດຈີນ ແລະ ອາຊີຕາເວັນອອກ ສ່ຽງໃຕ້. ພື້ນທີ່ ສາມາດປູກໄດ້ ຮັບປະສິດທິພາບ ສູງ ແມ່ນໃນເຂດອາຊີ ອາຄະເນ. ໝາກລຳໃຍມີຄຸນຄ່າ ທາງດ້ານໂພສະນາການ ສູງ, ຊຶ່ງ ປະກອບດ້ວຍທາດຕ່າງໆ. ເປັນອາຫານເສີມ ທາງດ້ານໂພສະນາການ. ນອກນີ້ ຍັງນຳໃຊ້ເຂົ້າ ເປັນ ວັດຖຸດິບ ປ້ອນໂຮງງານ.

❖ ດິນຟ້າອາກາດທີ່ເໝາະສົມ

ຕົ້ນລຳໃຍ ມັກດິນທີ່ອຸດົມສົມບູນປານ -ກາງ pH 5.5-6.5. ປະລິມານນ້ຳຝົນ 1.200 ຫາ 1.444 ມມ/ປີ. ອຸນນະພູມ ສະເລ່ຍປະມານ 20-25 c. ຊ່ວງອອກດອກ ຕ້ອງການອຸນນະພູມ 10-12 c.

❖ ແນວພັນ

ແນວພັນໝາກລຳໃຍ ມີພັນພື້ນເມືອງ ແລະ ພັນ ປັບປຸງຄື: ພັນປັບປຸງ: ປະຈຸບັນ ມີພັນ ອີດໍ, ອີຫ່ຽວ, ຊົມພູ, ບ້ຽວ, ພູໄກ ແລະ ກອນປຸ.

❖ ການຂະຫຍາຍພັນ

ການຂະຫຍາຍພັນ ໝາກລຳໃຍ ທີ່ມີປະ ສິດທິຜົນສູງ ໃນປະຈຸບັນ ແມ່ນນຳໃຊ້ ວິທີໂຫນ່ງ. ແຕ່ ໂດຍທົ່ວໄປ ການຂະຫຍາຍພັນ ມີຫຼາຍວິທີ ເຊັ່ນ: ການກໍ່ແກ່ນ,ການສຽບຍອດ, ການໂຫນ່ງ (ຕອນ), ການຕິດຕາ ແລະ ອື່ນໆ.

❖ ການປູກ

ລະດູປູກ ທີ່ເໝາະສົມ ແມ່ນເລີ່ມຕົ້ນລະດູຝົນ ຫາ ກາງລະດູຝົນ. ກຽມດິນໃຫ້ລະອຽດດີ. ໄລຍະປູກ ແມ່ນຂຶ້ນກັບເປົ້າໝາຍ. ຖ້າປູກເພື່ອການ ຂະຫຍາຍພັນ ແມ່ນ 5x5 ມ ຫຼື 6x6 ແມັດ. ແຕ່ຖ້າ ປູກເພື່ ອເກັບຜົນຜະລິດ ແມ່ນ 8x8 ແມັດ ຫຼື 10x10 ແມັດ.

❖ ການບົວລະບັດຮັກສາ

ຫຼັງຈາກປູກແລ້ວຕ້ອງເອົາໃຈໃສ່ໃນການ ເສັຍຫຍ້າ ແລະ ໃຫ້ນ້ຳສະໝ່ຳສະເໝີ. ເພາະວ່າຕົ້ນລຳໃຍປູກໃໝ່ 1-3 ປີ ຕ້ອງການນ□າຫຼາຍທີ່ສຸດ.

ການໃສ່ຝຸ່ນເປັນປັດໃຈສຳຄັນຕໍ່ການຈະເລີນເຕີບໂຕ, ລຳໃຍຕ້ອງການຝຸ່ນເລັ້ງ ເພື່ອເສີມສ້າງທາງໃບ ໃຫ້ເຕີບໃຫຍ່ໃນອັດຕາ 100-200 ກຼ/ຕົ້ນ/ປີ. ຫຼັງ ຈາກປີທີສາມແລ້ວເລີ່ ມໃສ່ຝຸ ນ NPK ສູດ 13.13.21 ຫຼື 15.15.15 ໃນຈ□ານວນ 100-200 ກຼ/ຕົ້ນ/ປີ.

❖ ການຕັດແຕ່ງ

ຕັດແຕ່ງງ່າທີ່ມີພະຍາດ ແລະ ແມງໄມ້ທຳລາຍ ຫຼື ງ່າທີ່ຢູ່ໃນຊົງພຸ່ມໃຫ້ແສງສະຫວ່າງສ່ອງ ເຂົ້າໄປໃນຊົງພຸ່ມ ຢ່າງໜ້ອຍ 30%.

❖ ພະຍາດ ແລະ ແມງໄມ້

ພະຍາດ

ພະຍາດລາແປ້ງທຳລາຍໃບອ່ອນ ແລະ ທຳລາຍ ໝາກອ່ອນ.
ການປ້ອງກັນ: ໃຊ້ຢາ ຣິໂນຊານ, ກຼູປາວິດ ສີດຕາມຕົ້ນໃບ.

ແມງໄມ້:

ມີ ເພັ້ຍຂາວ, ບົ້ງເຈາະຫອຍ.
ການປ້ອງກັນ: ໃຊ້ຢາເຊວິນ 85% ສີດຕາມ ຕົ້ນໃຫ້ທົ່ວ.

❖ ການເກັບກ່ຽວ

ເວລາເກັບກ່ຽວລຳໃຍ ຢູ່ໃນປະເທດເຮົາ ແມ່ນຢູ່ໃນທ້ອງເດືອນ 7-8 ເກັບໝາກສຸກແກ່ດີ.